LOWELL
PUBLIC SCHOOLS

## ການປ່ຽນແປງທີ່ມີຄວາມສຳຄັນຕໍ່ນະໂຍບາຍການຍົກເລີກການຮຽນການສອນ

ວັນທີ 14 ທັນວາ 2020

ສະບາຍດີບັນດາຄອບຄົວຂອງນັກຮຽນປະຈຳໂຮງຮຽນ Lowell Public Schools,

ສືບເນື່ອງມາຈາກພະຍາກອນອາກາດໃນຊ່ວງລະດູໜາວທ້າຍອາທິດນີ້, ພວກເຮົາຈຶ່ງຕ້ອງການຕິດຕໍ່ຫາຊຸມຊົນ LPS ຂອງພວກເຮົາ ແລະ ແຈ້ງໃຫ້ທ່ານຮັບຊາບກ່ຽວກັບການປ່ຽນແປງຂອງນະໂຍບາຍການຍົກເລີກການຮຽນການສອນ ສຳລັບສົກຮຽນນີ້.

ໃນອະດີດ, ຫາກສະພາບອາກາດບໍ່ເອື້ອອຳນວຍ, ພວກເຮົາມີຕົວເລືອກວ່າຈະເລື່ອນມື້ເປີດສົກຮຽນອອກໄປ ຫຼືບໍ່ກໍ ຍົກເລີກການຮຽນການສອນ ແລະ ຈັດໃຫ້ມີ "ວັນທີມະຕຶກ". ເມື່ອບໍ່ດົນມານີ້ຄະນະກຳມະການຂອງໂຮງຮຽນໄດ້ ອະນຸມັດໃຫ້ເພີ່ມຕົວເລືອກທີສາມ ໃນການຈັດໃຫ້ມີ "ມື້ການຮຽນຮູ້ຜ່ານທາງໄກຢ່າງເຕັມຮູບແບບ" ຕໍ່ກັບນະໂຍບາຍທີ່ ມີຢູ່ແລ້ວ ໄປຈົນເຖິງວັນທີ 30 ມິຖຸນາ 2021.

ຕົວເລືອກໃໝ່ນີ້ຊ່ວຍເພີ່ມຄວາມຍືດຍຸ່ນໃຫ້ແກ່ພວກເຮົາ. ແທນທີ່ຈະຈັດໃຫ້ມີວັນທີມະຕຶກແບບທີ່ເຄີຍປະຕິບັດຜ່ານ ມາຫາກອາຄານຮຽນຂອງພວກເຮົາປິດຕົວລົງເນື່ອງຈາກສະພາບອາກາດໃນຊ່ວງລະດູໜາວ, ຕອນນີ້ພວກເຮົາສາມາດ ຈັດໃຫ້ມີມື້ການຮຽນການສອນຜ່ານທາງໄກ ເຊິ່ງຈະນັບລວມເຂົ້າໃນຈຳນວນມື້ຮຽນໜັງສືທີ່ກຳນົດໄວ້.

ການຕັດສິນໃຈຈັດໃຫ້ມີມື້ການຮຽນຮູ້ຜ່ານທາງໄກຢ່າງເຕັມຮູບແບບ ແມ່ນຈະສົ່ງຜົນກະທົບຕໍ່ນັກຮຽນທຸກຄົນ, ບໍ່ວ່າ ຕາມປົກກະຕິແລ້ວພວກເຂົາຈະເຂົ້າຮັບການສຶກສາໃນໂຮງຮຽນ ຫຼື ແບບທາງໄກກໍຕາມ. ອາຄານຮຽນຈະປິດຕົວລົງໃນ ມື້ການຮຽນຮູ້ຜ່ານທາງໄກຢ່າງເຕັມຮູບແບບ ແລະ ນັກຮຽນທຸກຄົນຈະເຂົ້າເຖິງການຮຽນການສອນໄດ້ຢູ່ເຮືອນຂອງຕົນ ເອງ. ເຊິ່ງເຈົ້າໜ້າທີ່ຂອງໂຮງຮຽນຈະແຈ້ງຂໍ້ມູນເພີ່ມເຕີມໃຫ້ນັກຮຽນຮັບຊາບກ່ຽວກັບຄວາມຄາດຫວັງຂອງການ ຮໍ່າຮຽນສຳລັບມື້ການຮຽນຮູ້ຜ່ານທາງໄກຢ່າງເຕັມຮູບແບບ ອັນເນື່ອງມາຈາກສະພາບອາກາດທີ່ບໍ່ເອື້ອອຳນວຍ.

ເມື່ອອາຄານຮຽນປິດຕົວລົງເນື່ອງຈາກສະພາບອາກາດບໍ່ເອື້ອອຳນວຍ, ເຊິ່ງລວມເຖິງມື້ການຮຽນຮູ້ຜ່ານທາງໄກຢ່າງເຕັມ ຮູບແບບ, ຈຸດໃນການຮັບເອົາອາຫານກໍຈະປິດຕົວລົງເຊັ່ນກັນ. ເຖິງຢ່າງໃດກໍຕາມ, ໃນກໍລະນີທີ່ພວກເຮົາສາມາດຄາດ ການເຖິງພາຍຸທີ່ອາດຈະເກີດຂຶ້ນ, ນັກຮຽນກໍຈະສາມາດຮັບເອົາອາຫານຄາບພິເສດໄດ້ທີ່ຈຸດຮັບອາຫານໃນມື້ກ່ອນທີ່ຈະ ເກີດເຫດການດັ່ງກ່າວ. ເຊິ່ງພວກເຮົາຈະແຈ້ງເລື່ອງນີ້ໃຫ້ຄອບຄົວຂອງນັກຮຽນຮັບຊາບລ່ວງໜ້າ.

ພວກເຮົາຈະແຈ້ງມື້ການຮຽນຮູ້ຜ່ານທາງໄກຢ່າງເຕັມຮູບແບບ, ມື້ພັກຮຽນ ຫຼື ການເລື່ອນມື້ເຂົ້າຮຽນອອກໄປຜ່ານທາງ ໂທລະສັບ, ອີເມວ, ເວັບໄຊຂອງ LPS ແລະ ສື່ສັງຄົມອອນລາຍຂອງ LPS. ນອກຈາກນັ້ນ, ພວກເຮົາຍັງຈະແບ່ງປັນ ຂ່າວນີ້ໃຫ້ກັບສະຖານີໂທລະພາບ ແລະ ວິທະຍຸທ້ອງຖິ່ນຮັບຊາບອີກດ້ວຍ.

ຂອບໃຈທີ່ທ່ານໃຫ້ການສະໜັບສະໜູນ ແລະ ການຮ່ວມມືຢ່າງຕໍ່ເນື່ອງຕະຫຼອດໄລຍະສົກຮຽນນີ້.